ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 064 /ທຄຕລ 2020

ນະຄອນຫຼວງວຽງຈັນ, ວັນທີ: 14 AUG 2020

# ໜັງສືແຈ້ງເຊີນ

**ເຖິງ**: ບັນດາບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍອຸປະກອນໄອທີ ໃນນະຄອນຫຼວງວຽງຈັນ.

**ເລື່ອງ**: ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາເຄື່ອງອຸປະກອນໄອທີ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງເຊີນມາຍັງທ່ານບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນຈຳໜ່າຍອຸປະກອນໄອທີ ເພື່ອຍື່ນຊອງເຂົ້າຮ່ວມປະມູນດັ່ງມີລາຍລະອຽດຂ້າງລຸ່ມນີ້:

| ລາຍການ | ຈຳນວນ | ໝາຍເຫດ |
|---|---|---|
| - ຕໍ່ອາຍຸ License & MA ຂອງອຸປະກອນ<br><br>**Cisco Next Generation Firewall FPR2130-BUN** | 02 | ອຸປະກອນດັ່ງກ່າວ ທຄຕລ ໄດ້ຈັດຊື້ ແລະ ຕິດຕັ້ງນຳໃຊ້ ໃນປີ 2017 ແລະ ຕ້ອງການຕໍ່ License& MA ໂດຍມີທາງເລືອກດັ່ງນີ້:<br>Option 1: License & MA ໄລຍະ 01 ປີ |

- **ໜ້າທີ່ຂອງບໍລິສັດຜູ້ສະໜອງປະກອບດັ່ງນີ້:**

1. ຜູ້ສະໜອງຕ້ອງຮັບປະກັນການສ້ອມແປງ, ແກ້ໄຂບັນຫາ ຫຼື ປ່ຽນແທນອຸປະກອນ ກໍລະນີອຸປະກອນເກີດມີບັນຫາ ຫຼື ເປ່ເພ, ພ້ອມທຳການແກ້ໄຂບັນຫາແບບ 24/7 ໂມງ.
2. ຜູ້ສະໜອງຕ້ອງຮັບປະກັນການ Update License Subscription ໄດ້ຕະຫຼອດໄລຍະເວລາສັນຍາ.
3. ຜູ້ສະໜອງມີໜ້າທີ່ໃຫ້ການຊ່ວຍເຫຼືອໃນການແກ້ໄຂບັນຫາ ທີ່ຕິດພັນກັບການຕັ້ງຄ່າຕ່າງໆ ໃນໂຕອຸປະກອນ.
4. ຜູ້ສະໜອງມີໜ້າທີ່ຊ່ວຍເຫຼືອ Update Software Version / Upgrade Firmware ຕາມແຕ່ລະໄລຍະທີ່ມີການແຈ້ງໃຫ້ Update ຈາກເຈົ້າຂອງຜະລິດຕະພັນ.
5. ໄລຍະຮັບປະກັນຜູ້ສະໜອງຕ້ອງໄດ້ມາກວດສອບອຸປະກອນຣາດແວທີ່ກ່ຽວຂ້ອງໃນສັນຍາທີ່ນຳໃຊ້ ຢູ່ສະຖານທີ່ຂອງຜູ້ຊື້ ຢ່າງໜ້ອຍ 01 ຄັ້ງ/ປີ ໂດຍທີ່ວ່າມີ ຫຼື ບໍ່ມີບັນຫາກໍ່ຕາມ ແລະ ມີການເຊັນຢັ້ງຢືນພ້ອມ. ນອກນັ້ນຜູ້ສະໜອງຕ້ອງໄດ້ເຂົ້າມາອັບເດດຄວາມຮູ້ ແລະ ເທັກໂນໂລຍີຕ່າງໆທີ່ກ່ຽວຂ້ອງໃຫ້ແກ່ຜູ້ຊື້ຮັບຮູ້.

- **ເງື່ອນໄຂຂອງບໍລິສັດຫ້າງຮ້ານຕົວແທນຈຳໜ່າຍອຸປະກອນໄອທີ ມີຄວາມຕ້ອງການຍື່ນຊອງປະມູນຕ້ອງປະກອບດັ່ງນີ້:**

❖ **<u>ເອກະສານຊອງທີ 1 (ບໍ່ປິດຊອງ)</u>**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດຈຳໜ່າຍເຄື່ອງອຸປະກອນໄອທີ, ຕ້ອງມີວິຊາການສະເພາະ ແລະ ມີປະສົບການ ຢ່າງໜ້ອຍ 05 ປີຂຶ້ນໄປ (ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນ ປີ2019, **ໃບຢັ້ງຢືນການເປັນຕົວແທນຈຳໜ່າຍສິນຄ້າດັ່ງກ່າວ**).
2. ລະບຸລາຍລະອຽດໜ້າວຽກ, ການຈັດສົ່ງ, ການຊຳລະ, ການຮັບປະກັນ.
3. ເອກະສານສະແດງຜົນງານຜ່ານມາທີ່ເຄີຍສະໜອງອຸປະກອນໄອທີດັ່ງກ່າວໃຫ້ພາກສ່ວນອື່ນ.
4. ກຳນົດຍື່ນຊອງມາດຕະຖານເຕັກນິກດ້ານໄອທີ **ຈະປິດຮັບວັນທີ 27/08/2020 ເວລາ 9:00 ໂມງ** ທີ່ພະແນກຫ້ອງການບໍລິຫານ-ການເງິນສຳນັກງານໃຫຍ່ ທີ່ປ່ອງບໍລິການຂາເຂົ້າ-ຂາອອກ ຊັ້ນ 4 ອາຄານ C.

❖ **<u>ເອກະສານຊອງທີ 2 (ປິດຊອງ)</u>**.



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245. Website: http://www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

1. ໃບສະເໜີລາຄາໃຫ້ລະບຸ ລາຄາຫົວໜ່ວຍແຕ່ລະລາຍການ ແລະ ລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບໃຫ້ຄົບຖ້ວນ
2. **ໃນວັນທີ 03/09/2020 ເວລາ 09:30 ໂມງ** ແມ່ນມື້ເປີດຊອງປະມູນ ສະນັ້ນ ບໍລິສັດ/ຮ້ານຕົວແທນຈຳໜ່າຍຈະຕ້ອງຖືຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມ ທີ່ຫ້ອງປະຊຸມຊັ້ນ 3 ອາຄານ C.
3. ບໍລິສັດຜູ້ສະໜອງຕ້ອງກຳນົດລາຍລະອຽດລາຍການທີ່ສະໜອງ ພ້ອມທັງລະບຸເງື່ອນໄຂຕ່າງໆ ມາໃຫ້ຄົບຖ້ວນ ແລະ ໃຫ້ກົງກັບຄວາມຕ້ອງການໃນຕາຕະລາງຂ້າງເທິງນັ້ນ. ການຈັດຊື້ແມ່ນຈະເລືອກເອົາ **Option** ໃດໜຶ່ງເທົ່ານັ້ນ.
4. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 2% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ (ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 03/10/2020) ຫຼື ແຊັກທີ່ວິຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.

❖ **ໝາຍເຫດ:** ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:

- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາຫຼືບໍ່ຍື່ນເງິນຄ້ຳປະກັນການປະຕິບັດສັນຍາຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ທຄຕລໃນອັດຕາ 2% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້ດ້ວຍ.

**ປະທານຄະນະກຳມະການປະມູນ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ບັນທະລາດ ແກ້ວປະເສີດ

**ຜູ້ປະສານງານ:** ນາງ ວັນມີນາ ລໍຄຳຈັນ ເບີໂທ 02059333349
ນາງ ເພັດສົມພອນ ຍອຍບົວກ່ອງ ເບີໂທ 02056800008